ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 37452 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 22 ທັນວາ 2023

# ຂໍ້ຕົກລົງ

## ວ່າດ້ວຍ ການອະນຸມັດໃຫ້ເຊັນສັນຍາກັບ ທີ່ປຶກສາຈັດຊື້-ຈັດຈ້າງ ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ (SEARECC).

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມແຜນການ ແລະ ການເງິນ ສະບັບເລກທີ 44659/ກຜງ, ລົງວັນທີ 01 ທັນວາ 2023;
- ອີງຕາມ ບົດສະຫຼຸບສັງລວມ ຂອງບັນດາທ່ານ ຮອງລັດຖະມົນຕີສະບັບເລກທີ 37156/ຫກ, ລົງວັນທີ 20 ທັນວາ 2023.

## ລັດຖະມົນຕີ ຕົກລົງ:

ມາດຕາ 1 ເຫັນດີຮັບຮອງເອົາ ທ່ານ ພົນ ຈິດຕະບຸນຕີ (Mr. Phonh Chittabounty) ໃນຕຳແໜ່ງທີ່ປຶກສາຈັດຊື້-ຈັດຈ້າງ ໂຄງການ ເພື່ອຊ່ວຍວຽກໂຄງການພັດທະນາຕາມແລວທາງເສດຖະກິດອາຊີ ຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ, ປະຈຳຢູ່ກົມແຜນການ ແລະ ການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ ໃນໄລຍະເວລາ 2 ປີ ໃນມູນຄ່າສັນຍາລວມທັງໝົດ USD 74.880,00 (ເຈັດສິບສີ່ພັນ ແປດຮ້ອຍແປດສິບ ໂດລາ ສະຫະລັດ).

ມາດຕາ 2 ມອບໃຫ້ ຫົວໜ້າກົມແຜນການ ແລະ ການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ ເຊັນສັນຍາກັບທີ່ປຶກສາດັ່ງກ່າວໃຫ້ຖືກຕ້ອງຕາມລະບຽບການ.

ມາດຕາ 3 ສຳລັບງົບປະມານໃນການຈັດຈ້າງທີ່ປຶກສາ ດັ່ງກ່າວແມ່ນໃຫ້ນຳໃຊ້ງົບປະມານກູ້ຢືມຈາກທະນາຄານໂລກພາຍໃຕ້ໂຄງການ (SEARECC) ພາຍໃຕ້ລະຫັດຈັດຊື້-ຈັດຈ້າງ ເລກທີ: ICS-052.

ມາດຕາ 4 ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ສຳເລັດຜົນດ້ວຍດີ.

ມາດຕາ 5 ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະມົນຕີ

ງາມປະສົງ ເມືອງມະນີ

ບ່ອນນຳສົ່ງ:

- ຫ້ອງການກະຊວງ ຍທຂ 1 ສະບັບ;
- ກົມກ່ຽວຂ້ອງ ບ່ອນລະ 1 ສະບັບ;
- ສຳເນົາ 1 ສະບັບ.